ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1330 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 30 ທັນວາ 2021

# ແຈ້ງການ

ເຖິງ : ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ : ແຈ້ງປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍ ກ່ຽວກັບ ສ່ວຍສາອາກອນ ເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 158/ຫສນຍ, ລົງວັນທີ 17 ກຸມພາ 2021.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 886/ຫສນຍ, ລົງວັນທີ 28 ກໍລະກົດ 2021.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປະຕິບັດລາຄາຂາຍຍ່ອຍໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 13,950 | 12,290 | 10,470 |
| 2 | ແຂວງຜົ້ງສາລີ | 14,590 | 12,930 | 11,110 |
| 3 | ແຂວງຫຼວງນ້ຳທາ | 14,310 | 12,650 | 10,830 |
| 4 | ແຂວງອຸດົມໄຊ | 14,430 | 12,770 | 10,950 |
| 5 | ແຂວງບໍ່ແກ້ວ | 14,050 | 12,390 | 10,570 |
| 6 | ແຂວງຫຼວງພະບາງ | 14,320 | 12,660 | 10,840 |
| 7 | ແຂວງໄຊຍະບູລີ | 14,200 | 12,540 | 10,720 |
| 8 | ແຂວງຫົວພັນ | 14,350 | 12,690 | 10,870 |
| 9 | ແຂວງຊຽງຂວາງ | 14,140 | 12,480 | 10,660 |
| 10 | ແຂວງວຽງຈັນ | 13,950 | 12,290 | 10,470 |
| 11 | ແຂວງບໍລິຄຳໄຊ | 14,030 | 12,370 | 10,550 |
| 12 | ແຂວງຄຳມ່ວນ | 13,980 | 12,320 | 10,500 |
| 13 | ແຂວງສະຫວັນນະເຂດ | 13,980 | 12,320 | 10,500 |
| 14 | ແຂວງສາລະວັນ | 14,160 | 12,500 | 10,680 |
| 15 | ແຂວງຈຳປາສັກ | 14,010 | 12,350 | 10,530 |
| 16 | ແຂວງເຊກອງ | 14,160 | 12,500 | 10,680 |
| 17 | ແຂວງອັດຕະປື | 14,190 | 12,530 | 10,710 |
| 18 | ແຂວງໄຊສົມບູນ | 14,230 | 12,570 | 10,750 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 01 ມັງກອນ 2022; ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
- ການປັບລາຄານ້ຳມັນເຊື້ອໄຟ ຄັ້ງນີ້ ແມ່ນໄດ້ປັບອັດຕາອາກອນຊົມໃຊ້, ອາກອນມູນຄ່າເພີ່ມ ແລະ ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 390 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 60 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 50 ກີບ/ລິດ.
- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0922/ກຄພນ, ລົງວັນທີ 29 ທັນວາ 2021 ຈົນກວ່າຈະມີການປ່ຽນແປງ.
- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1255/ອຄ, ລົງວັນທີ 16 ທັນວາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີ

ປອ.ຄຳແພງ ໄຊສົມແພງ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).